ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
===== 000 =====

LALCO
LAO ASEAN LEASING PUBLIC COMPANY

ເລກທີ 9520
ນະຄອນຫຼວງວຽງຈັນ, ວັນທີ: 20 ພຶດສະພາ 2025

ຮຽນ: - **ທ່ານ ຫົວໜ້າ ສານັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,**
- **ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ,**
- **ບັນດາຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ທີ່ນັບຖື.**

ເລື່ອງ: ແຈ້ງມະຕິກອງປະຊຸມສາມັນສະພາບໍລິຫານ ຄັ້ງທີ 3/2025 ຄັ້ງວັນທີ 20 ພຶດສະພາ 2025.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ, ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ, ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.
- ອີງຕາມ ແຈ້ງມະຕິກອງປະຊຸມວິສາມັນຂອງສະພາບໍລິຫານ ຄັ້ງທີ 1/2025 ລົງວັນທີ 28 ເມສາ ປີ 2025.

ກອງປະຊຸມສາວິມັນສະພາບໍລິຫານ ຄັ້ງທີ 3/2025 ຂອງບໍລິສັດ ລາວອາຊຽນເຊົ່າສິນເຊື່ອ ມະຫາຊົນ (ລອຊ ຫຼື ບໍລິສັດ) (ຕໍ່ໄປເອີ້ນວ່າ ກອງປະຊຸມ) ແມ່ນໄດ້ຈັດຂຶ້ນໃນວັນທີ 29 ເມສາ 2025 ເວລາ 08:00 ໂມງ ທີ່ຫ້ອງການ ຂອງບໍລິສັດ. ໂດຍການເປັນປະທານຂອງທ່ານ ນາງ ຢຸກິ ສະກອດ , ປະທານສະພາບໍລິຫານ, ພ້ອມດ້ວຍຄະນະສະພາ ບໍລິຫານອີກ 4 ທ່ານ ແລະ ຄະນະບໍລິຫານເປັນຜູ້ສັງເກດການ.

ໃນກອງປະຊຸມໄດ້ປຶກສາຫາລືບັນຫາຕ່າງໆ ແລະ ມີມະຕິທີ່ຕົກລົງ ດັ່ງລຸ່ມນີ້:

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ("ບໍລິສັດ") ຂໍແຈ້ງມາຍັງທ່ານຊາບວ່າ: ໃນເບື້ອງຕົ້ນບໍລິສັດມີແຜນ ຈະຈັດກອງປະຊຸມສາມັນຜູ້ຖືຫຸ້ນປະຈຳປີ 2024 ຂໍແຈ້ງກ່ຽວກັບການເລື່ອນກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2024 ຄັ້ງ ທີ 2 ຈາກວັນທີ 20 ພຶດສະພາ **2025 ມາເປັນ ວັນທີ 20 ມິຖຸນາ 2025** . ແຕ່ເນື່ອງຈາກພວກຂ້າພະເຈົ້າຍັງຢູ່ໃນຂັ້ນ ຕອນການທົບທວນພາຍໃນກ່ຽວກັບ ບົດລາຍງານການກວດສອບຈາກພາຍນອກ, ດັ່ງນັ້ນ ບໍລິສັດບໍ່ສາມາດດຳເນີນກອງ ປະຊຸມໄດ້ຕາມກຳນົດ. ເພື່ອຮັບປະກັນການເປີດເຜີຍຢ່າງຄົບຖ້ວນ ແລະ ຖືກຕ້ອງຕໍ່ຜູ້ຖືຫຸ້ນ, ບໍລິສັດໄດ້ມີມະຕິເລື່ອນ ເວລາຈັດກອງປະຊຸມດັ່ງກ່າວເປັນວັນທີ **20 ມິຖຸນາ 2025.**

ດ້ວຍຄວາມນັບຖືຢ່າງສູງ
ປະທານສະພາບໍລິຫານ

ທ່ານ Yuki Scott